ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********000**********

ກະຊວງ ໄປສະນີ

ໂທລະຄົມມະນາຄົມ ແລະ ການສື່ສານ

ຫ້ອງການ

2287

ເລກທີ : ປທສ/ .ຫກ

ນະຄອນຫລວງວຽງຈັນ, ວັນທີ: 19 DEC 2014

# ແຈ້ງການ

ເຖິງ: ບັນດາບໍລິສັດໂທລະຄົມມະນາຄົມ LTC, ETL, unitel ແລະ Beeline.

ເລື່ອງ: ສະເໜີໃຫ້ນຳໃຊ້ຟອນເຜັດຊະລາດ ແລະ ແປ້ນພິມພາສາລາວເຂົ້າໃນການບໍລິການຂອງລະບົບໂທລະຄົມມະນາຄົມ.

ກະຊວງ ໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານຊາບວ່າ: ປະຈຸບັນທາງກະຊວງຮ່ວມກັບບໍລິສັດ ຫວຽດເທວ ໄດ້ສຳເລັດການຄົ້ນຄ້ວາ ແລະ ພັດທະນາຟອນເຜັດຊະລາດ ແລະ ແປ້ນພິມພາສາລາວ ສຳລັບຄອມພິວເຕີ ແລະ ມືຖື ພ້ອມທັງໄດ້ທົດລອງນຳໃຊ້ຂັ້ນພື້ນຖານພາຍໃນກະຊວງ ປທສ, ເຫັນວ່າບັນດາໂປຣແກຣມດັ່ງກ່າວສາມາດນຳໃຊ້ໄດ້ຢ່າງສົມບູນ. ດັ່ງນັ້ນ, ເພື່ອເປັນການສົ່ງເສີມ ແລະ ເຜີຍແຜ່ການນຳໃຊ້ຟອນ ແລະ ແປ້ນພິມດັ່ງກ່າວ ຈຶ່ງອອກໃບແຈ້ງການສະບັບນີ້ເພື່ອໃຫ້ທາງບໍລິສັດໂທລະຄົມ ບັນຈຸເອົາຟອນ ແລະ ແປ້ນພິມພາສາລາວເຂົ້າໃນລະບົບການບໍລິການໂທລະຄົມມະນາຄົມຕ່າງໆ (ເຊັ່ນ: ລະບົບ SMS, Website, ມືຖື ແລະ ອື່ນໆ) ເພື່ອເປັນຕົວແບບຂອງການນຳໃຊ້ໃຫ້ແກ່ສັງຄົມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ຫ້ອງການ

ບຸນສະເຫຼີມໄຊ ເຄນນາວົງ